Southern Financial College

# POINT OF SALE




## ຄູ່ມື ສຳຫຼັບຜູ້ນຳໃຊ້

## Finance IT Education Center

https://www.facebook.com/sfclao

WORLD FRIENDS KOREA

# ສາລະບານ

**1. ແນະນຳ ລະບົບ POS**

1-1. ຄຳວ່າລະບົບ POS ? ---------------------------------------- 4
1-2. ວາງໂຄງສ້າງລະບົບ POS ---------------------------------------- 5
1-2. ແນະນຳໂປແກມ POS ---------------------------------------- 6

**2. ການເລີ່ມຕົ້ນຂັ້ນພື້ນຖານPOS**

2-1. ການດຳເນີນໂປແກມ ແລະການລອກອິນ ---------------------------- 7
2-2. ໜ້າຫຼັກຂອງPOS ---------------------------------------- 8

**3. ການຂາຍ**

3-1. ໜ້າຈໍພາບສະແດງແຜນຜັງຂອງໂຕະ ---------------------------- 10
3-2. ການຈັດວາງໂຕະ ---------------------------------------- 11
3-3. ໜ້າຈໍຂາຍຫຼັກ ---------------------------------------- 12
3-4. ການສັ່ງ ---------------------------------------- 13
3-5. ການຍົກເລີກສັ່ງ ---------------------------------------- 14
3-6. ການເຂົ້າເບິ່ງສິນຄ້າ ---------------------------------------- 15
3-7. ການບໍລິການ ---------------------------------------- 16
3-8. ການຈ່າຍ ---------------------------------------- 17
3-9. ການບັນທຶກຂອງຫ້ອງຄົວ ---------------------------------------- 18
3-10. ການຫຼຸດລາຄາ ---------------------------------------- 19
3-11. ການຫໍ່ ---------------------------------------- 20

**4. ລາຍການທຸລະກຳ**

4-1. ໜ້າຈໍເມນູຫຼັກ ---------------------------------------- 21
4-2. ຍອດເງິນເຂົ້າອອກ ---------------------------------------- 22
4-3. ສະພາບອັດຕາການຂາຍ ---------------------------------------- 23
4-4. ການສົ່ງສິນຄ້າຄືນ ---------------------------------------- 24
4-5. ການກວດເບິ່ງໃບບິນ ---------------------------------------- 25

# ສາລະບານ

**5. ການຈັດການພື້ນຖານ**

5-1. ໜ້າຈໍຫຼັກການຈັດການພື້ນຖານ ---------------------------------- 26
5-2. ການລົງທະບຽນສິນຄ້າ ------------------------------------------ 27
5-3. ການລົງທະບຽນກະແຈສຳພັດ ------------------------------------ 28
5-4. ການຈັດການໂຕະ --------------------------------------------- 29

**6. ການດາວໂລດ**

6-1. ໜ້າຕາງດາວໂລດ ------------------------------------------------ 30

**7. ປິດ**

7-1. ໜ້າຈໍປິດ ------------------------------------------------------- 31

**8. ລະບົບການຈັດການບ່ອນທຳການທຸລະກິດ**

8-1. ຄຳວ່າລະບົບການຈັດການທຸລະກິດ? ------------------------------ 32
8-2. ລອກອິນ ------------------------------------------------------- 33
8-3. ໜ້າຫຼັກ -------------------------------------------------------- 34
8-4. ການຈັດການສິນຄ້າ --------------------------------------------- 35
8-5. ການຈັດການຜູ້ສະໜອງ ------------------------------------------ 36
8-6. ກວດເບິ່ງບົດລາຍງານ ------------------------------------------ 37
8-7. ລົງທະບຽນຊື້ ------------------------------------------------- 39
8-8. ລົງທະບຽນຂາຍ ----------------------------------------------- 40
8-9. ການຈັດການຜູ້ໃຊ້ ---------------------------------------------- 42
8-10. ການຈັດການຄ່າໃຊ້ຈ່າຍ ----------------------------------------- 43
8-11. ການຈັດການກອບຄ່າໃຊ້ຈ່າຍ ------------------------------------ 44
8-12. ການຕັ້ງຄ່າສິ່ງແວດລ້ອມ ------------------------------------------ 45

# 1. ການແນະນໍາລະບົບ POS

## 1-1. ຄໍາວ່າລະບົບ POS?



ລະບົບ POS( Point of Sale) ນໍາໃຊ້ເຄື່ອງຄອມພິວເຕີ ທີ່ປະກອບດ້ວຍຮ່າງກາຍ ແລະໜ້າຈໍ ໂດຍການເນັ້ນໃສ່ອິນເຕີເຟສທີ່ເປັນວິທີສໍາພັດ ເຊິ່ງສາມາດບໍລິຫານຈັດການໄດ້ຢ່າງສະດວກວ່ອງໄວທີ່ໄດ້ບັນທຶກໄວ້ຖານຂໍ້ມູນການຄ້າຂາຍດ້ວຍລະບົບຄອມພິວເຕີເປັນຕົວຊ່ວຍໃນສະຖານທີ່ເຮັດທຸລະກິດ.



## 1-2. ໂຄງສ້າງອຸປະກອນລະບົບ POS

▶ໂຄງສ້າງອຸປະກອນຮ່າງກາຍ POS




▶ ການສ້າງເຄື່ອງມື POS ໃນໂທລະສັບ



## 1-3. ແນະນຳໂປແກມ POS

ໂປແກມ POS ນີ້ສາມາດອຳນວຍຄວາມສະດວກ ການຄວບຄຸມລວມໄດ້ຫຼາກຫຼາຍລາຍການ ເຊັ່ນການ ຈັດການດ້ານແຮງງານ, ເລື່ອງການຈ່າຍ, ເລື່ອງຄັ້ງສາງ, ເລື່ອງການຈຳໜ່າຍໄດ້ເວລານັ້ນເລີຍ, ຈັດການເລື່ອງບ່ອນທຳການທະລະກິດ ຢູ່ໃນຂອບເຂດທຸກປະເພດທຸລະກິດ ທີ່ກ່ຽວຂ້ອງກັບອາຫານ, ຮ້ານອາຫານ, ກາເຟ່, ຮ້ານອາຫານສະເພາ, ຮ້ານອາຫານທົ່ວໄປ ແລະອື່ນໆອີກ.

### ▶ ຄຸນລັກສະນະຂອງໂປແກມ



- ການສົ່ງຕໍ່ຂໍ້ມູນການສັ່ງໄປໃຫ້ເຄົາເຕີແລະຫ້ອງຄົວໃນເວລາດຽວກັນ
- ປ້ອງກັນບັນຫາຜິດພາດຊ່ວຍຄິດໄລ່ໄດ້ຢ່າງຊັດເຈນ ຊ່ວຍປະຫຍັດເວລາການລໍຖ້າຂອງລູກຄ້າໄດ້
- ສະໜອງການລາຍງານໄດ້ຫຼາກຫຼາຍ
- ສະໜອງຕົວເລືອກຫຼາກຫຼາຍທີ່ຖືກກັບຄວາມຕ້ອງການຂອງຜູ້ໃຊ້ບໍລິການ: ເງິນສົດ, ບັດ, ຄະແນນ, ການຈ່າຍຄູປ່ອງ
- ການສົ່ງເສີມເຄື່ອງໃຊ້ທີ່ຫຼາກຫຼາຍ ເຄື່ອງໂທລະສັບ ແລະອື່ນໆໄດ້
- ການຈັດການແຮງງານທີ່ໄດ້ຮັບປະສິດຕິພາບດ້ວຍການ ຈັດການຮວມກັນ, ຈັດການບ່ອນທຳການທຸລະກິດ ແລະ ແຕ່ລະປະເພດສິນຄ້າ, ແຕ່ລະການນຳເຂົ້າ, ຊື່ແຕ່ລະປະເພດສິນຄ້າ ແລະ ສາມາດກວດເບິ່ງໄດ້.

### ▶ ຜົນປະໂຫຍດຂອງການນຳເຂົ້າໂປແກມ




- ສາມາດຈັດການກ່ຽວກັບເລື່ອງເງິນໄດ້ຢ່າງມີປະສິດຕິພາບ ແລະ ຫຼຸດຜ່ອນ ວຽກທີ່ຄົງຄ້າງທີ່ໜັດກຳນົດເວລານັ້ນໄດ້.
- ສາມາດຢັ້ງຮູ້ແນວໂນ້ມການຂາຍໃນເວລານັ້ນໆໄດ້ຢ່າງຊັດເຈນ
- ສາມາດຈັດການຄຸມຄອງລາຄາ ແລະລາຍການສິນຄ້າ ແລະອື່ນໆໄດ້ຢ່າງເປັນຮູບປະທຳ
- ສາມາດກວດເບິ່ງສະພາບການດຳເນີນທຸລະກິດບໍ່ວ່າຈະຢູ່ໃສເວລາໄດ້ກໍຕາມ.

# 2. ການເລີ່ມແບບພື້ນຖານຂອງPOS

## 2-1. ການເຂົ້າແລະດຳເນີນງານໂປແກມ

ຄິກເອົາໄອຄ່ອນໃນໜ້າຈໍຄອມແລ້ວກໍດຳເນີນງານໂປແກມໄດ້.
ຖ້າໜ້າຕ່າງບ່ອນກົດເຂົ້າໂປແກມປະກົດອອກມາແລ້ວ ປ້ອນໄອດີ ແລະລະຫັດໃສ່ແລ້ວເຂົ້າໄປໃນໂປແກມໄດ້.




① ລັກສະນະພາບໜ້າຈໍບ່ອນເຂົ້າຫາ: ຫຼັງຈາກປ້ອນ ຊື່ ໄອດີ, ລະຫັດ ແລ້ວໃຫ້ຄິກໃສ່ປຸ່ມກົດເຂົ້າ
② ນຳໃຊ້ແປ້ນຕົວເລກຢູ່ເບື້ອງຂວານັ້ນ ຫຼືສາມາດນຳໃຊ້ແປ້ຄີບອດໄດ້.

❖ ບ່ອນອີງ

- ສຳຫຼັບຜູ້ນຳໃຊ້ທີ່ຕິດຕັ້ງໂປແກມເທື່ອທຳອິດ
- ໄອດີຜູ້ນຳໃຊ້: 0001 / ລະຫັດເຂົ້າ: 1234

# 2-2. ໜ້າຕ່າງຫຼັກຂອງPOS

ຖ້າການເຂົ້າໂປແກມໄດ້ຮຽບຮ້ອຍແລ້ວ ມັນຈະເຂົ້າໄປຫາໜ້າຫຼັກໄດ້ເລີຍ.




- ການເປີດກິດຈະການ : ຄິກ ບ່ອນເປີດກິດຈະການທໍາອິດ. ໃຊ້ເທື່ອດຽວຕໍ່ມື້
- ການຂາຍ : ຫຼັງຈາກທີ່ກົດບ່ອນເປີດກິດຈະການແລ້ວຈຶ່ງຈະສາມາດເລືອກລາຍການໄດ້ ແລ້ວໜ້າຈໍການຂາຍປະກົດອອກມາ.
- ສະພາບການຂາຍ : ການກວດເບິ່ງລາຍງານການຂາຍ
- ລາຍການກິດຈະການ : ເງິນແຮຕົ້ນທືນ, ເງິນເຂົ້າອອກ, ການເບິ່ງບິນ, ການສົ່ງຄືນ, ການເບິ່ງລາຍລະອຽດການປິດ
- ພື້ນຖານ: ສິນຄ້າຈໍາເປັນໃນການບໍລິຫານ POS, ໂຕະ, ກະແຈສໍາພັດ, ການລົງທະບຽນ ຕົວເລືອກ ແລະການຫຼຸດລາຄາ
- ດາວໂລດ : ຂໍ້ມູນສະຖານທີ່ທໍາການທີ່ໄດ້ລົງທະບຽນໄວ້ເສີເວີ, ດາວໂລດຂໍ້ມູນສິນຄ້າທີ່ຂາຍ ແລະອື່ນໆ
- ການປິດກິດຈະການ :ຄິກບ່ອນປິດກິດຈະການສຸດທ້າຍ.
- ການຍົກເລີກການປິດ : ຍົກເລີກການປິດແລະກັບເຂົ້າສູ່ເວລາກ່ອນໜ້ານີ້.

## ດຽວກ່ອນ!

## ເວລາກົດລອກອິນເຂົ້າໄປແລ້ວມີຂໍ້ຄວາມປະກົດຂຶ້ນມາ




ຫຼັງຈາກປິດ ລາຍການໃນໜ້າຫຼັກແລ້ວ ຄິກ ເປີດທຳການ ແລ້ວກໍ່ແປງວັນເວລາການທຳການແລະເວລາຂອງລະບົບໃຫ້ກົງກັນ.

## ໜ້າຕາການເປີດທຳການ




ນີ້ແມ່ນໜ້າຕາ ບ່ອນເອົາເງິນທົນແຮເອົາເຂົ້າໄວ້ໃນລີ້ນຊັກບ່ອນເກັບເງິນ ທົນແຮເລີ່ມຕົ້ນຢູ່ຮ້ານບ່ອນທຳການທຸລະກິດ

❖ ຂໍ້ຄວນໃສ່ໃຈ

ກໍລະນີບໍ່ມີເງິນທົນແຮຖ້າ ໃຫ້ຄິກ ປຸ່ມ[ເປີດ ທຳການ ] ເທົ່ານັ້ນ.

# 3. ການຂາຍ

## 3-1. ໜ້າຫຼັກຂອງໂຕະ




① ການແບ່ງຊັ້ນ: ການເພີ່ມ/ສາມາດລຶບໄດ້
② ໂຕະ
③ ສະພາບໂຕະ : ໝາຍຈຳນວນໂຕະທີ່ກຳລັງສັ່ງ ແລະໄລ່ເປັນຍອດເງິນຕາມທີ່ສັ່ງນັ້ນ
④ ຍ້າຍໂຕະ: ການເລືອກກໍລະນີຕ້ອງການຍ້າຍໂຕະຫຼືຣວມໂຕະກັນ
⑤ ການແຍກໂຕະ : ເລືອກເວລາຕ້ອງການແຍກໂຕະ
⑥ ລາຍການທຳການ : ເລືອກໃນເວລາຕ້ອງການເບິ່ງ ລາຍລະອຽດ ເຊັ່ນ ໃບບິນ, ລາຍລະອຽດການສັ່ງ, ລາຍລະອຽດເງິນເຂົ້າອອກ ແລະອື່ນໆ
⑦ ການໄຂບ່ອນໄວ້ເງິນ : ເລືອກກໍລະນີໄຂລິ້ນຊັກບ່ອນໄວ້ເງິນ

❖ ຂໍ້ຄວນລະວັງ

ຮູບແບບການຈັດການຈະສະແດງໜ້າຈໍໃນກໍລະນີການຈ່າຍຫຼັງໃຊ້ບໍລິການເທົ່ານັ້ນ ສ່ວນກໍລະນີຈ່າຍກ່ອນໃຊ້ບໍລິການແມ່ນຈະບໍ່ປະກົດໜ້າຈໍໃຫ້ເຫັນ

## 3-2. ການວາງໂຕະ




① (ເລກ)ຊື່ໂຕະ
② ຍອດເງິນທີ່ສັ່ງ
③ ເວລາທີ່ສັ່ງ
④ ຈໍານວນລາຍການສິນຄ້າ

### 3-2-1. ການຍ້າຍສິນຄ້າ




ຄິກປຸ່ມຍ້າຍສິນຄ້າ -> ຄິກໂຕະທີ່ໄດ້ຍ້າຍ -> ຄິກໂຕະທີ່ຈະຍ້າຍ

① ເລືອກສິນຄ້າ
② ຄິກປຸ່ມ >
③ ຄິກປຸ່ມບັນທຶກ

## 3-3. ໜ້າຫຼັກການຂາຍ




① ສະພາບການສັ່ງຂອງໂຕະທີ່ໄດ້ສັ່ງແລ້ວ
② ຍົກເລີກສັ່ງ(ຍົກເລີກສິນຄ້າ: ຍົກເລີກລາຍການທີ່ໄດ້ເລືອກເທົ່ານັ້ນ, ຍົກເລີກທັງໝົດ: ຍົກເລີກທຸກລາຍການເມນູ)
③ ປຸ່ມປ່ຽນປະລິມານລາຍການເມນູສັ່ງ
④ ປຸ່ມຍ້າຍເທິງ/ລຸ່ມ
⑤ ໜ້າຕາງສະແດງ ສະພາບ ເງິນທອນ/ຍອດເງິນ/ປະລິມານທັງໝົດຂອງໂຕະກ່ຽວຂ້ອງ
⑥ ແຜ່ນຕົວເລກ
⑦ ປຸ່ມຕົວເລືອກ ຫຼຸດລາຄາ, ປ່ຽນແປງຍອດເງິນ, ປ່ຽນແປງປະລິມານ ທີ່ຜ່ານການປ້ອນເຂົ້າດ້ວຍຕົວເລກ
⑧ ລາຍການເມນູ(ປະເພດນ້ອຍ)ຂອບເຂດກຳນົດ
⑨ ສິນຄ້າທີ່ໄດ້ລົງທະບຽນໃນຂອບເຂດກຳນົດ
⑩ ປຸ່ມເລືອກ ສັ່ງ,ກວດເບິ່ງສິນຄ້າດ ການຈ່າຍ, ການບັນທຶກໃນຫ້ອງຄົວ

❖ ຂໍ້ຄວນລະວັງ

ວັນເວລາການທຳການ ແລະເວລາໃນລະບົບບໍ່ກົງກັນມັນຈະໝາຍເປັນສີແດງໃຫ້ເຫັນ.

## 3-4. ການສັ່ງ

ເລືອກກໍລະນີແຂກຕ້ອງການສັ່ງ. [ຂາຍ > ເລືອກໂຕະ]

1. ເລືອກໂຕະ
2. ເລືອກຂອບເຂດ
3. ເລືອກລາຍການເມນູ
4. ຄິກປຸ່ມ[ສັ່ງ]

❖ ເພີ່ມເຕີມ

ວິທີສັ່ງກໍລະນີສິນຄ້າບໍ່ໄດ້ລົງທະບຽນ




① ການສັ່ງສິນຄ້າ(ຍອດ ເງິນ ເປັນ 0 )ອື່ນໆ
② ປ້ອນຍອດເງິນດ້ວຍແປ້ນຕົວເລກ
③ ຄິກປຸ່ມປ່ຽນແປງຍອດເງິນ
④ ຄິກປຸ່ມ[ສັ່ງ]

## 3-5. ການຍົກເລີກການສັ່ງ

ກໍລະນີລູກຄ້າຍົກເລີກລາຍການສັ່ງ.

[ຍົກເລີກສິນຄ້າ] : ເລືອກກໍລະນີທີ່ຈະຍົກເລີກລາຍການສະເພາະໃນບັນດາລາຍການທີ່ໄດ້ສັ່ງໄປແລ້ວເທົ່ານັ້ນ.

1. ເລືອລາຍການທີ່ຈະຍົກເລີກຢູ່ໃນໜ້າຕ່າງຂາຍ
2. ເລືອກປຸ່ມ[ຍົກເລີກສິນຄ້າ]
3. ຄິກປຸ່ມ[ສັ່ງ]

[ຍົກເລີກທັງໝົດ]
: ເລືອກກໍລະນີຈະຍົກເລີກລາຍການທັງໝົດທີ່ໄດ້ສັ່ງໄປແລ້ວນັ້ນ.

1. ເລືອກລາຍການທີ່ຈະຍົກເລີກຢູ່ໃນໜ້າຕ່າງຂາຍ
2. ເລືອກປຸ່ມ[ຍົກເລີກທັງໝົດ]
3. ຄິກປຸ່ມ[ສັ່ງ]



## 3-6. ການກວດເບິ່ງສິນຄ້າ

ກໍລະນີບໍ່ມີລາຍການເມນູທີ່ໄດ້ລົງທະບຽນໄວ້ໃນຂອບເຂດ ໃຫ້ສັ່ງຜ່ານການກວດເບິ່ງສິນຄ້າ.





1. ເລືອກປຸ່ມ[ກວດເບິ່ງສິນຄ້າ]
2. ເລືອກປະເພດ ຫຼື ປ້ອນຊື່ສິນຄ້າໃສ່
3. ຄິກປຸ່ມ[ກວດເບິ່ງ]
4. ຄິກປຸ່ມ[ລົງທະບຽນ]

## 3-7. ການບໍລິການ

ເປັນຕົວເລືອກເຮັດໜ້າທີ່ສະໜອງລາຍການສັ່ງຜ່ານການບໍລິການ.







1. ເລືອກປຸ່ມ[ບໍລິການ]
2. ຖ້າເລືອກປະເພດຢູ່ໃນໜ້າຕ່າງການບໍລິການ ມັນຈະໝາຍ [S]ຢູ່ຕໍ່ໜ້າສິນຄ້າ ແລະຍອດເງິນເປັນ 0 .

| ລຳ... | ຊື່ສິນຄ້າ | ປະ... | ລາຄາຕໍ່ໜ່ວຍ | ການຫຼຸດ... | ຈຳນວນເງິນ |
|---|---|---|---|---|---|
| 1 | [S]Ice coffe | 1 | 20,000 | 20,000 | 0 |
| 2 | Cafe latte | 1 | 15,000 | 0 | 15,000 |

❖ ຄວນໃສ່ໃຈ

ການລົງທະບຽນ ເມນູຫຼັກ ພື້ນຖານ ການຈັດການບໍລິການ ຖ້າຄິກຕາມລຳດັບມັນຈະໝາຍໜ້າຕ່າງທີ່ສາມາດລົງທະບຽນການບໍລິການໄດ້

## 3-8. ການສໍາຫຼະ(ຈ່າຍ)

ຕົວເລືອກເຮັດໜ້າທີ່ສໍາຫຼະຍອດເງິນທີ່ສັ່ງ.




1. ຫຼັງຈາກຢືນຢັ້ນຍອດເງິນແລ້ວ ຖ້າຄິກປຸ່ມ[ການຈ່າຍເງິນສົດ] ໃບຄິດໄລ່ເງິນກໍຈະປິ່ນອອກເປັນໃບ ບິນໃຫ້ .

❖ ລະວັງ

ຖ້າປ້ອນຍອດເງິນທີ່ໄດ້ຮັບ ດ້ວຍແປ້ນຕົວເລກເຂົ້າໄປແລ້ວເງິນກໍຈະຖືກສແດງອອກມາ.

2. ເວລາຈ່າຍເງິນ ຕາມສ່ວນຂອງໃຜລາວທີ່ໄດ້ສັ່ງນັ້ນແມ່ນ ໃຫ້ເລືອກປຸ່ມ [ແຍກສໍາຫຼະ(ຈ່າຍ)].




① ເລືອກສິນຄ້າ
② ຄິກປຸ່ມ[ລົງລຸ່ມ]
③ ຖ້າຄິກປຸ່ມ[ເງິນສົດ] ໃບໄລ່ເງິນຈະປິ່ນອອກມາໄດ້.
④ ຂັ້ນຕອນ ①~③ ຈະເຮັດຊໍ້າກັນຈົນກ່ວາຈະຮອດການສໍາຫຼະສິນຄ້ານັ້ນ.

## 3-9. ການບັນທຶກໃນຫ້ອງຄົວ

ແມ່ນການເຮັດໜ້າທີ່ສົ່ງບັນທຶກໄປຫາປິ່ນເຕີໃນຫ້ອງຄົວ.







1. ຫຼັງການສັ່ງສິນຄ້າແລ້ວ ໃຫ້ຄິກປຸ່ມ [ບັນທຶກຫ້ອງຄົວ]
2. ຄິກການບັນທຶກໃນຄົວທີ່ໄດ້ລົງທະບຽນໄວ້ ຫຼື ປ້ອນຜ່ານທາງຄີບອດໂດຍກົງເລີຍ
3. ຖ້າຄິກປຸ່ມ[ຢືນຢັນ] ມັນຈະສົ່ງໄປຫາປິ່ນເຕີຫ້ອງຄົວໄດ້.

❖ ລະວັງ

ຖ້າຫາກຄິກປຸ່ມ [ເມນູຫຼັກ > ພື້ນຖານ > ການຈັດການບັນທຶກຫ້ອງຄົວ ]ຕາມລຳດັບ ມັນຈະສແດງໜ້າຕ່າງທີ່ສາມາດລົງທະບຽນການບັນທຶກຫ້ອງຄົວໄດ້.

## 3-10. ການຫຼຸດລາຄາ

ແມ່ນການຫຼຸດລາຄາຍອດເງິນທີ່ໃນບັນຊີທີ່ໄດ້ລົງທະບຽນໄວ້ແລ້ວນັ້ນ.







1. ຫຼັງສັ່ງສິນຄ້າແລ້ວໃຫ້ຄິກ ປຸ່ມ [ຫຼຸດລາຄາ]
2. ຖ້າເລືອກບັນຊີຫຼຸດລາຄາ ຍອດເງິນຈະຖືກຫຼຸດລາຄາໂດຍອັດຕະໂນມັດ.

| ລຳ... | ຊື່ສິນຄ້າ | ປະ... | ລາຄາຕໍ່ໜ່ວຍ | ການຫຼຸດ... | ຈຳນວນເງິນ |
|---|---|---|---|---|---|
| 1 | Cafe latte | 1 | 15,000 | 1,500 | 13,500 |
| 2 | Ice coffe | 1 | 20,000 | 0 | 20,000 |

❖ ລະວັງ

ຖ້າຄິກ [ເມນູຫຼັກ > ພື້ນຖານ >ການຈັດການຫຼຸດລາຄາ] ຕາມລຳດັບ ໜ້າຕ່າງທີ່ສາມາດລົງທະບຽນບັນຊີການຫຼຸດລາຄານັ້ນຈະປະກົດອອກມາ.

## 3-11. ການຫໍ່

ແມ່ນການເຮັດໜ້າທີ່ ທີ່ໃຊ້ເວລາຫໍ່ສິນຄ້າທີ່ໄດ້ສັ່ງແລ້ວນັ້ນ.




| ລໍາ... | ຊື່ສິນຄ້າ | ປະ... | ລາຄາຕັ້ງທີ | ການຫຼຸດ... | ຈໍານວນເງິນ |
|---|---|---|---|---|---|
| 1 | [P]Cafe latte | 1 | 15,000 | 1,500 | 13,500 |
| 2 | Ice coffe | 1 | 20,000 | 0 | 20,000 |

1. ຄິກປຸ່ມ [ຫໍ່] ຫຼັງການສັ່ງສິນຄ້າແລ້ວ
2. ມັນຈະປະກົດສະແດງ[P]ອອກມາຕໍ່ໜ້າຊື່ສິນຄ້າ.

# 4. ລາຍການເມນູການທຳທຸລະກິດ

## 4-1. ໜ້າຕາຫຼັກຂອງລາຍການເມນູການທຳທຸລະກິດ

ແມ່ນການເຮັດໜ້າທີ່ ທີ່ຈຳເປັນຕໍ່ການຈັດການການຂາຍ ເຊັ່ນ ຍອດເງິນເຂົ້າອອກ, ການຂາຍ, ເວລາປິດ ແລະອື່ນໆ.




- ເງິນທຶນແຮ : ນຳໃຊ້ເວລາປ້ອນເງິນທຶນແຮເພີ່ມເຕີມ
- ເງິນເຂົ້າອອກ : ນຳໃຊ້ເວລາທີ່ ຢາກລົງທະບຽນເງິນເຂົ້າອອກຊ່ວງກາງ ແລະບັນຊີເງິນເຂົ້າອອກ ນັ້ນ ລົງຖະບຽນໂດຍຄິກ [ເມນູຫຼັກ >ພື້ນຖານ >ການຈັດການເງິນເຂົ້າອອກຊ່ວງກາງ] ຕາມລຳດັບ ແລ້ວຈະດຳເນີນລົງທະບຽນໄດ້.
- ສະພາບຍອດຂາຍ : ເຂົ້າເບິ່ງການລາຍງານກ່ຽວກັບຍອດຂາຍ
- ສົ່ງເຄື່ອງຄືນ : ນຳໃຊ້ເວລາກໍລະນີລູກຄ້າຍົກເລີກການສຳຫຼະ
- ເຂົ້າເບິ່ງໃບບິນ: ນຳໃຊ້ເວລາຕ້ອງການເບິ່ງລາຍລະອຽດທີ່ລູກຄ້າໄດ້ຈ່າຍແລ້ວນັ້ນ
- ລາຍລະອຽດການປິດ : ໃຊ້ໃນກໍລະນີຈະເບິ່ງລາຍລະອຽດການປິດ
- ການເຂົ້າເບິ່ງລາຍລະອຽດການສັ່ງ : ນຳໃຊ້ກໍລະນີຈະເຂົ້າເບິ່ງລາຍລະອຽດການຍ້າຍໂຕະ , ການຍົກເລີກ ກັບ ການສັ່ງ ແລະອື່ນໆ
- ສະພາບການອານຸມັດ : ນຳໃຊ້ກໍລະນີຈະເຂົ້າເບິ່ງ ສະພາບການອານຸມັດ ການສຳຫຼະດ້ວຍບັດເຄດິດ.

# 4. ລາຍການທຳທຸລະກິດ

## 4-2. ຍອດເງິນເຂົ້າອອກ

ໃຊ້ກໍລະນີມີລາຍລະອຽດທີ່ໄດ້ເອົາເງິນເຂົ້າເພີ່ມເຕີມນອກຈາກຍອດເງິນທີ່ໄດ້ຂາຍໃສ່ບ່ອນໄວ້ເງິນ.







① ເລືອກປຸ່ມ [ຍອດເງິນເຂົ້າອອກ]
② ຄິກ [ຍອດເງິນເຂົ້າໄລຍະກາງ] ຢູ່ຊື່ບັນຊີເງິນເຂົ້າ
③ ຫຼັງປ້ອນຍອດເງິນເຂົ້າແລ້ວ ຖ້າມີລາຍການທີ່ຢາກເພີ່ມເຕີມແມ່ນໃຫ້ບັນທຶກໄວ້ຊ່ອງໝາຍເຫດ
④ ຖ້າຄິກ ປຸ່ມ[ເພີ່ມເຕີມ] ແລ້ວເນື້ອໃນກ່ຽວຂ້ອງຈະສະແດງອອກຢູ່ເບື້ອງຂວາ

❖ ລະວັງ

ເງິນອອກໄລຍະກາງກໍລົງທະບຽນດ້ວຍວິທີດຽວກັນເລີຍ.

# 4. ລາຍການເມນູທຸລະກິດ

## 4-3. ສະພາບການຂາຍ

ເລືອກໃຊ້ເວລາຕ້ອງການກວດເບິ່ງຍອດຂາຍຕາມແຕ່ວັນເວລາ ທີ່ໄດ້ເກັບກຳໄວ້ຢູ່ບ່ອນທຳການທຸລະກິດ.










① ເລືອກປຸ່ມ [ສະພາບການຂາຍ]
② ເລືອກ [ວັນເວລາ] ທີ່ຕ້ອງການຢາກກວດເບິ່ງຢູ່ໜ້າຕາງສະແດງສະພາບການຂາຍ.
③ ເລືອກປະເພດລາຍງານທີ່ຕ້ອງການກວດເບິ່ງ
④ ຖ້າຫາກຄິກປຸ່ມ [ກວດເບິ່ງ] ສະພາບການຂາຍຈະສະແດງອອກຢູ່ເບື້ອງຂວາ

# 4. ລາຍການເມນູທຸລະກິດ

## 4-4. ການສົ່ງຄືນສິນຄ້າ

ແມ່ນເຮັດໜ້າທີ່ ການສົ່ງສິນຄ້າຄືນກໍລະນີລູກຄ້າຂໍຍົກເລີກໂຕທີ່ໄດ້ສຳຫຼະແລ້ວ.







① ເລືອກ [ລາຍການທຸລະກິດ > ສົ່ງສິນຄ້າຄືນ] ຕາມລຳດັບ
② ຄິກປຸ່ມຢູ່ໃນໜ້າຕ່າງສົ່ງສິນຄ້າຄືນ [ກວດເບິ່ງ]
③ ຖ້າຫາກເລືອກ ລາຍການສົ່ງສິນຄ້າຄືນແລ້ວ ໃບບິນດັ່ງກ່າວຈະຖືກໝາຍໄວ້ຢູ່ດ້ານຂວາ.
④ ຖ້າຄິກປຸ່ມ [ສົ່ງຄືນ] ແລ້ວໃຫ້ເລືອກ ຄຳວ່າ Yes ຢູ່ໃນ ຂໍ້ຄວາມທີ່ປະກົດອອກມານັ້ນ ແລ້ວມັນຈະຈັດການສົ່ງຄືນໃຫ້

| ໂພ... | ເວລາທີ່ຂາຍ | ເລກກາ... | ການ... | ເວລາການຂາຍ | ຈຳນວນເ... | ເງິນສົດ | ບັດ | ອື່ນໆ | ໃບບິນເງິນສົດ |
|---|---|---|---|---|---|---|---|---|---|
| 0001 | 20190111 | 106 | ການສົ່ງ... | 20190128155312 | 35,000 | 35,000 | 0 | 0 | 0 |
| 0001 | 20190111 | 105 | ປົກກະຕິ | 20190128155034 | 35,000 | 35,000 | 0 | 0 | 0 |

# 4. ລາຍການເມນູທຸລະກິດ

## 4-5. ການກວດເບິ່ງໃບບິນ

ໃຊ້ນີ້ເພື່ອພິມໃບບິນຄືນອີກ.







① ເລືອກ[ກວດເບິ່ງໃບບິນ]
② ຄິກປຸ່ມ [ກວດເບິ່ງ] ຢູ່ໜ້າຕ່າງປ່ອນກວດເບິ່ງໃບບິນ
③ ຖ້າເລືອກທຸລະກຳການເຄືອນໄຫວ ແລ້ວໃບບິນຈະຖືກໝາຍຢູ່ດ້ານຂວາ.
④ ຖ້າຄິກປຸ່ມ [ປີ້ນອອກ] ມັນຈະປີ້ນອອກເປັນໃບໄລ່ເງິນຈາກເຄື່ອງປີ້ນເຕີ.

❖ ລະວັງ

ກໍລະນີມີເຄື່ອງສະແກນບາໂຄດ ສາມາດສະແກນເລກການຄ້າ ຜ່ານບາໂຄດທີ່ໝາຍຢູ່ໃບບິນ ເຊິ່ງສາມາດກວດເບິ່ງໄດ້ຢ່າງວ່ອງໄວ.

# 5. ການຈັດການຂັ້ນພື້ນຖານ

## 5-1. ໜ້າຈໍຫຼັກ ການຈັດການພື້ນຖານ

ແມ່ນເຮັດໜ້າທີ່ທີ່ໄດ້ລົງທະບຽນຂໍ້ມູນພື້ນຖານທີ່ຈໍາເປັນໃນການບໍລິຫານ POS.



- ລົງທະບຽນສິນຄ້າ : ເມນູ, ລົງທະບຽນແບບແຍກ ແລະ ການຈັດການ
- ການລົງທະບຽນກະແຈສໍາພັດ : ເມນູທີ່ໄດ້ໝາຍຢູ່ໜ້າຈໍຂາຍ, ລົງທະບຽນແຍກ
- ລົງທະບຽນປີ້ນເຕີຫ້ອງຄົວ : ເລືອກເອົາບັນດາເມນູ ທີ່ສົ່ງໄປຫາປີ້ນເຕີ
- ການຈັດການບັນທຶກຂອງຫ້ອງຄົວ : ລົງທະບຽນຂໍ້ມູນພື້ນຖານທີ່ໄດ້ບັນທຶກໄວ້ແລ້ວຈະປີ້ນອອກນັ້ນ ເປັນໃບສັ່ງຂອງຫ້ອງຄົວ
- ການຈັດການໂຕະ: ຕິດຕັ້ງ ຊື່ໂຕະທີ່ໄດ້ໝາຍຢູ່ໃນໜ້າຈໍຜັງໂຕະ, ຕໍາແໜ່ງ, ຂະໜາດ ແລະອື່ນໆ
- ການຈັດການຫຼຸດລາຄາ : ລົງທະບຽນຂໍ້ມູນພື້ນຖານ ລາຍການທີ່ຫຼຸດລາຄາ
- ການຈັດການບໍລິການ: ລົງທະບຽນຂໍ້ມູນພື້ນຖານລາຍການບໍລິການ
- ການຈັດການຍອດເຂົ້າອອກໄລຍະກາງ : ລົງທະບຽນບັນຊີຍອດເຂົ້າອອກໄລຍະກາງ
- ລົງທະບຽນໜ້າທີ່ຂອງປຸ່ມ : ລົງທະບຽນໜ້າທີ່ຂອງປຸ່ມທີ່ໝາຍຢູ່ໜ້າຈໍການຂາຍ
- ການຈັດການພະນັກງານ : ການລົງທະບຽນຜູ້ໃຊ້ແລະການປັບປຸງ POS
- ການຈັດການເຫດຜົນຍົກເລີກການສັ່ງ: ລົງທະບຽນເຫດຜົນເວລາຍົກເລີກການສັ່ງ.

# 5. ການຈັດການພື້ນຖານ

## 5-2. ການລົງທະບຽນສິນຄ້າ

ເລືອກກໍລະນີຕ້ອງການການຈັດການ ແລະລົງທະບຽນເມນູ.




① ເລືອກປຸ່ມ [ແຍກລົງທະບຽນ] ແລ້ວ ສາມາດແຍກລົງທະບຽນ ຂະໜາດນ້ອຍ/ກາງ/ໃຫຍ່.
② ຫຼັງເລືອກ ທີ່ຈະແຍກລົງທະບຽນສິນຄ້າໃໝ່ ແລ້ວ ປ້ອນຊື່ສິນຄ້າ, ລາຄາຂາຍ ແລະອື່ນໆ.
③ ຖ້າຄິກ ປຸ່ມ[ອັນໃໝ່] ແລ້ວຈະລົງທະບຽນສິນຄ້າໄດ້.

❖ ລະວັງ

ກໍລະນີ ຈະປັບປຸງຂໍ້ມູນສິນຄ້າ ຫຼັງຈາກເລືອກສິນຄ້າດ້ານຂວາທີ່ກ່ຽວຂ້ອງແລ້ວ ຄິກ [ບັນທຶກ] ກໍຈະສຳເລັດການປັບປຸງ.

# 5. ການຈັດການພື້ນຖານ

## 5-3. ລົງທະບຽນກະແຈສຳພັດ

ປຸ່ມຫຍໍ້ສັ້ນທີ່ຊ່ວຍໃຫ້ສາມາດລົງທະບຽນເຄື່ອງຢ່າງວ່ອງໄວໄດ້ ຢູ່ໜ້າຕ່າງການຂາຍ




▶ ລົງທະບຽນປຸ່ມແຍກ

① ຖ້າປ້ອນຈຳນວນ ປຸ່ມ ສິນຄ້າ/ການແຍກ ແລ້ວມັນກໍຈະມີປຸ່ມ ສິນຄ້າ ແລະປຸ່ມແຍກ ຕາມຈຳນວນປຸ່ມທີ່ປ້ອນເຂົ້ານັ້ນ.

② ຖ້າເລືອກການແຍກ ທີ່ວ່າງຢູ່ ແລ້ວມັນຈະມີໜ້າຕ່າງທີ່ສາມາດລົງທະບຽນກະແຈສຳພັດໄດ້.

▶ ລົງທະບຽນປຸ່ມສິນຄ້າ

A. ເລືອກສິນຄ້າທີ່ຕ້ອງໃຫ້ເປັນກະແຈສຳພັດ

B. ຖ້າເລືອກປຸ່ມທີ່ວ່າງຢູ່ນັ້ນ ສິນຄ້າກໍຈະລົງທະບຽນເປັນກະແຈສຳພັດໄດ້.

❖ ລະວັງ

- ຫຼັງເລືອກປຸ່ມ [ລຶບການແຍກ]ແລ້ວ ຖ້າເລືອກປຸ່ມ ແຍກແລ້ວ ກະແຈສຳພັດຈະຖືກລຶບເອງ.
- ຖ້າ[ເລືອກ], [ຍ້າຍ], [ລຶບ] ແລ້ວຈະສາມາດປັບປຸງປຸ່ມສິນຄ້າທີ່ໄດ້ລົງທະບຽນເປັນກະແຈສຳພັດໄດ້.

# 5. ການຈັດການພື້ນຖານ

## 5-4. ການຈັດການໂຕະ

- ຕິດຕັ້ງ ຊື່ໂຕະ, ຕຳແໜ່ງໂຕະ, ຂະໜາດ ແລະອື່ນໆ ທີ່ຈະໝາຍຢູ່ໜ້າຈໍຜັງໂຕະ.




▶ ການປັບປຸງ/ລົງທະບຽນ Hall

① ລົງທະບຽນ ຂະໜາດ ຫໍ ແລ້ວຄິກປຸ່ມ [ເພີ່ມຫໍ] ຫໍໃໝ່ກໍຈະເພີ່ມໄດ້.

② ກໍລະນີປ່ຽນຊື່ຫໍ ແລ້ວຄິກປຸ່ມ [ປັບປຸງ] .

③ ຖ້າຄິກ ປຸ່ມ ຫໍ ແລ້ວໜ້າຕ່າງທີ່ສາມາດ ປັບປຸງຊື່ໄດ້ກໍປະກົດອອກມາ.

▶ ການປັບປຸງ /ລົງທະບຽນ Table

A. ຫຼັງປ້ອນຈຳນວນ ລວງຕັ້ງຂອງໂຕະ/ ລວງຂວາງ ແລ້ວ ຖ້າຄິກປຸ່ມ [ສ້າງໂຕະ] ຈາກນັ້ນໂຕະໃໝ່ກໍເພີ່ມໄດ້.

B. ກໍລະນີ ຈະປ່ຽນຊື່ໂຕະ ຄິກປຸ່ມ [ແບບປັບປຸງ] .

C. ຖ້າຄິກປຸ່ມໂຕະ ຈາກນັ້ນໜ້າຕ່າງທີ່ສາມາດປັບຊື່ໂຕະກໍຈະປະກົດອອກມາ.

D. ເປັນປຸ່ມສຳຫຼັບຈັດລຽງໂຕະ.

# 6. ດາວໂລດ

## 6-1. ໜ້າຕ່າງດາວໂລດ

ໃຊ້ເວລາດາວໂລດ ຂໍ້ມູນສິນຄ້າ, ໂຕະ, ແປ້ນຊື່ ຈາກເຊີເວີ.




① ດາວໂລດ ຕາມທີ່ເລືອກ ໂຕະສິນຄ້າ, ໂຕະ, ແປ້ນຊື່[ດາວໂລດ]
② ດາວໂລດ ທັງໝົດ ຂໍ້ມູນສິນຄ້າ, ໂຕະ, ແປ້ນຊື່ [ດາວໂລດທັງໝົດ]
③ ຖ້າຄິກປຸ່ມ [ບັນທຶກ]ແລ້ວຈະບັນທຶກຢູ່ POS.

❖ ລະວັງ

ຕົວທຳໜ້າທີ່ດາວໂລດນັ້ນ ຂໍ້ມູນການຄ້າຂາຍ ແລະ ສິນຄ້າແມ່ນລົງທະບຽນຢູ່ໃນເຊີເວີ ແລະຈະສາມາດໃຊ້ໄດ້ຖ້າຫາກມີອິນເຕີເນັດເຊື່ອມຢູ່ .

# 7. ການປິດ

## 7-1. ໜ້າເວລາປິດ

- ❖ ເປັນເມນູທີ່ໃຊ້ເວລາປິດ ຫຼັງສິ້ນສຸດການເຮັດວຽກ ການຂາຍ ໃນມື້ນັ້ນ.
- ❖ ເຮັດໜ້າທີ່ໃນຂະນະປິດການເຮັດວຽກ ແລະໃນຂະນະລົງທະບຽນເງິນໃນບ່ອນໄວ້ເງິນນັ້ນວ່າ ມັນກົງ POS ໃນຂະນະລົງທະບຽນເງິນນັ້ນ.




① ປ້ອນຕົວເລກຕາມແຕ່ປະເພດທະນາບັດ ຕາມແຕ່ປະລິມານທີ່ມັນຖືກກັນ

② ຖ້າເລືອກປຸ່ມ [ປິດ] ລາຍລະອຽດຈະປື້ນອອກໃນບິນ ແລະຖ້າຄິກປຸ່ມ [ເມນູຫຼັກ > ເມນູດຳເນີນທຸລະກິດ> ລາຍລະອຽດການປິດ] ສາມາດກວດເບິ່ງລາຍລະອຽດທີ່ກ່ຽວຂ້ອງດັ່ງກ່າວ.

❖ ລະວັງ

- ກໍລະນີບໍ່ປິດດຳເນີນການທຸລະກິດ ມື້ຕໍ່ໄປມັນຈະບໍ່ຈັດການການດຳເນີນການ ຂອ POS ສະນັ້ນ ຕ້ອງໄດ້ ປິດການເຮັດວຽກຂອງມັນ ຫຼັງຈາກສິ້ນສຸດການດຳເນີນງານໃນມື້ນັ້ນ.
- ກໍລະນີເງິນສົດໃນຊ່ອງບ່ອນໄວ້ເງິນ ຫຼຸດກ່ວາ ການຂາຍຂອງ POS ມັນຈະໝາຍເປັນສີໝາກກ້ຽງ

# 8. ລະບົບຈັດການທີ່ທຳການ

## 8-1. ຄຳວ່າລະບົບການຈັດການທຸລະກິດວຽກ?



ລະບົບການຈັດການທຸລະກິດວຽກ ມັນບັນທຶກຂໍ້ມູນ ການຂາຍສິນຄ້າທີ່ເກີດຂຶ້ນຢູ່ POS ໃນເວລາຕົວຈິງ ໂດຍການຕັ້ງຄ່າຂໍ້ມູນ ສະຖານທີທຳການແລະ ຂໍ້ມູນສິນຄ້າ ທີ່ໃຊ້ ຢູ່ໃນ POS, ເຊິ່ງສາມາດເຂົ້າເບິ່ງ ສະພາບສາງເຄື່ອງ ແລະການຂາຍສິນຄ້າຜ່ານທາງມືຖື ຫຼື ຄອມພິວເຕີ ໃນເວລາຕົວຈິງໄດ້, ຜູ້ນຳໃຊ້ສາມາດບໍລິຫານຈັດການ ສະຖານທີ່ທຳການໄດ້ຢ່າງມີປະສິດຕິພາບຜ່ານການວິເຄາະອັດຕາການຂາຍທີ່ແນ່ນອນໄດ້.



# 8. ການຈັດການທຸລະກິດບ່ອນທຳການ

## 8-2. ການເຂົ້າຫາ

ຫຼັງຈາກການດຳເນີນການເປົາເຊີເວບໄຊດ້ວຍເຄື່ອງອຸປະກອນມືຖື ຫຼືຄອມພິວເຕີໄດ້ ແລ້ວ ປ້ອນ URLໃສ່ຊ່ອງທີ່ຢູ່ ຖ້າປະກົດມີໜ້າລອກອິນໃຫ້ປ້ອນໄອດີ ແລະ ລະຫັດໃສ່.




① ປ້ອນ URLໃສ່ ເຊື່ອມຫາການຈັດການທຸລະກິດ
② ເຂົ້າຫາ:ຫຼັງປ້ອນ ໄອດີ,ລະຫັດແລ້ວ ໃຫ້ກົດປຸ່ມເຂົ້າຫາ(ລອກອິນ)

❖ ລະວັງ

- ໃຫ້ຖາມຜູ້ຈັດການສຳລັບ ໄອດີ ແລະ ຕົວເຊື່ອ URL /ລະຫັດ

# 8. ການຈັດການທຸລະກິດສະຖານທີ່ທຳການ

## 8-3. ໜ້າຈໍຫຼັກ

ການເຂົ້າຫາສຳເລັດເປັນປົກກະຕິແລ້ວມັນຈະປ່ຽນໄປຫາໜ້າຈໍຫຼັກ




- ສິນຄ້າ : ການຈັດການ ແລະລົງທະບຽນສິນຄ້າທີ່ຂາຍ
- ຜູ້ສະໜອງ : ການຈັດການ ແລະການລົງທະບຽນການເຮັດຄ້າຂາຍ
- ບົດລາຍງານ : ເຂົ້າເບິ່ງການລາຍງານກ່ຽວກັບການຂາຍແຕ່ລະປະເພດ
- ການຊື້ : ການຈັດການ ແລະການລົງທະບຽນການຊື້ສິນຄ້າ
- ການຂາຍ : ໜ້າທີ່ POS ຕາມເວບໄຊ(ລົງທະບຽນສິນຄ້າ,ຂາຍ, ສົ່ງຄືນ, ສຳຫຼະ, ກວດເບິ່ງຍອດ)
- ພະນັກງານ: ການຈັດການ ແລະລົງທະບຽນ ພະນັກງານ
- ຄ່າໃຊ້ຈ່າຍ : ການຈັດການ ແລະລົງທະບຽນຄ່າໃຊ້ຈ່າຍ
- ກອບຄ່າໃຊ້ຈ່າຍ: ຈັດການ ແລະລົງທະບຽນ ກອບຄ່າໃຊ້ຈ່າຍ
- ການຕິດຕັ້ງ: ການຕັ້ງຄ່າສະພາບແວດລ້ອມ ການຈັດການທຸລະກິດ

# 8. ການຈັດການ ທຸລະກິດສະຖານທີ່ທໍາການ

## 8-4. ການຈັດການສິນຄ້າ

ເຮັດໜ້າທີ່ກວດເບິ່ງ, ລົບ, ປັບປຸງ, ລົງທະບຽນສິນຄ້າທີ່ຂາຍ.




▶ ຊ່ອງການຜະລິດສິນຄ້າໃໝ່




1) ໜ້າທີ່ປຸ່ມກົດ
   a. ລົບ
   b. ການປັບເປັນຊຸດສິນຄ້າທີ່ເລືອກ
   c. ການຜະລິດບາໂຄດ
   d. ເລືອກວັນທີ
   e. ການຕິດຕັ້ງເງື່ອນໄຂເຂົ້າເບິ່ງ
2) ປຸ່ມຜະລິດສິນຄ້າໃໝ່
3) ເອົາສິນຄ້າມາດ້ວຍໄຟເອັກເຊວ
4) ປ້ອນພາສາຄໍາສັບເຂົ້າເບິ່ງ
5) ຕົວເລືອກ ສົ່ງ ເປັນໄຟແລະ ເລືອກລາຍການທີ່ຈະໝາຍ
6) ຕົວເລືອກການປັບສາງເຄື່ອງ
7) ການເບິ່ງປະຫວັດສາງ
8) ການປັບ ຂໍ້ມູນສິນຄ້າ

*ພາກສ່ວນທີ່ເປັນສີແດງແມ່ນລາຍການທີ່ຈໍາເປັນທີ່ຕ້ອງໄດ້ປ້ອນເຂົ້າ

# 8. ການຈັດການ ທຸລະກິດສະຖານທີ່ທຳການ

## 8-5. ຈັດການຜູ້ສະໜອງ

ມັນເປັນໂຕເຮັດໜ້າທີ່ ຈັດການ ແລະການລົງທະບຽນການເຮັດທຸລະກິດຄ້າຂາຍ.







1) ປຸ່ມຜະລິດການເຮັດທຸລະກິດໃໝ່
   a. ຊື່ບໍລິສັດ
   b. ຊື່ຕົວແທນ
   c. ນາມສະກຸນຕົວແທນ
   d. ກົດປຸ່ມສົ່ງ




❖ ລະວັງ

- ສາມາດບັນທຶກ ເນື້ອໃນລາຍການດ້ວຍການກົດປຸ່ມສົ່ງໄປທີ່ ເປັນໄຟເອັກເຊວໄດ້

# 8. ການຈັດການ ທຸລະກິດສະຖານທີ່ທຳການ

## 8-6. ກວດເບິ່ງບົດລາຍງານ

ມັນເຮັດໜ້າທີ່ກວດເບິ່ງບົດລາຍງານແຕ່ລະປະເພດ.




ບົດລາຍງານຮູບແບບກາບຟິກ

ບົດລາຍງານ ຮູບແບບໂຕະ

01/01/2019 - 22/01/2019

| Category | Quantity | Subtotal | Tax | Total | Wholesale | Profit |
|---|---|---|---|---|---|---|
| fruit | 1 | K18,182 | K1,818 | K20,000 | K19,000 | -K818 |
| Juice | 17 | K140,009 | K10,191 | K150,200 | K137,180 | K2,829 |
| 과자류 | 17 | K15,453 | K1,547 | K17,000 | K8,500 | K6,953 |
| 담배 | 5 | K94,000 | K6,000 | K100,000 | K95,000 | -K1,000 |
| 카테고리1 | 4 | K34,500 | K1,500 | K36,000 | K7,000 | K27,500 |

Showing 1 to 5 of 5 rows






# ດຽວກ່ອນ!

## ວິທີເລືອກວັນທີ




▶ ການເລືອກວັນທີປະຈຳ

1) ໃຫ້ຄິກດ້ອຍເມົາເລືອກວັນທີເລີ່ມ.
2) ໃຫ້ຄິກວັນທີປິດດ້ອຍເມົາ.
3) ໃຫ້ຄິກ ປຸ່ມApply.

❖ ລະວັງ

ເລືອກໄລຍະເວລາທີ່ໄດ້ກຳນົດໄວ້ເບື້ອງຊາຍ ສາມາດເລືອກວັນທີ ທີ່ຕ້ອງການກວດເບິ່ງນັ້ນໄດ້ ວ່ອງໄວໄດ້

# 8. ການຈັດການ ທຸລະກິດສະຖານທີ່ທຳການ

## 8-7. ການລົງທະບຽນຊື້

ເປັນຕົວເລືອກເຮັດໜ້າທີ່ ລົງທະບຽນສິນຄ້າທີ່ຊື້ໃນບ່ອນເຮັດທຸລະກິດຄົບຄ້ານັ້ນ







1) ເລືອກສິ່ງຄືນ ຫຼື ຊື້
2) ສາຂາການເຂົ້າເບິ່ງສິນຄ້າ (ປ້ອນບາໂຄດຫຼືຊື່ສິນຄ້າໃສ່)
3) ປຸ່ມຜະລິດສິນຄ້າໃໝ່
4) ການຕັ້ງຄ່າປະລິມານ ແລະ ລາຄາສິນຄ້າທີ່ໄດ້ລົງທະບຽນແລ້ວ
5) ສ່ວນດ້ານການເລືອກບ່ອນເຮັດທຸລະກິດຄ້າຂາຍ
6) ປຸ່ມຜະລິດບ່ອນເຮັດທຸລະກິດໃໝ່
7) ຖ້າເລືອກປຸ່ມສຳເລັດ ການຊື້ໃໝ່ກໍຈະບັນລຸໄປໄດ້.




a. ປ້ອນຂໍ້ມູນ ຊື່ບ່ອນເຮັດເຮັດທຸລະກິດ, ຊື່ຕົວແທນ ແລະອື່ນໆ
b. ຖ້າຄິກປຸ່ມ Submit ແລ້ວລົງທະບຽນໄດ້

❖ ລະວັງ

ຢູ່ໃນເມນູການຈັດການຜູ້ສະໜອງກໍສາມາດລົງທະບຽນ ບ່ອນເຮັດທຸລະກິດຫຼວງໜ້າ.

# 8. ການຈັດການ ທຸລະກິດສະຖານທີ່ທຳການ

## 8-8. ການລົງທະບຽນຂາຍ

ມັນເຮັດໜ້າທີ່ POS ໃນລະບົບການຈັດການທຸລະກິດ ໃນການຂາຍສິນຄ້າ .




▶ ລົງທະບຽນຂາຍ

1) ການເລືອກສັ່ງສິນຄ້າ ຫຼືຂາຍ
2) ພາກສ່ວນການເຂົ້າເບິ່ງສິນຄ້າ(ປ້ອນບາໂຄດ ຫຼືຊື່ສິນຄ້າ)
3) ປຸ່ມຜະລິດສິນຄ້າໃໝ່
4) ການຕັ້ງຄ່າປະລິມານສິນຄ້າ ແລະລາຄາສິນຄ້າທີ່ໄດ້ລົງທະບຽນ
5) ເລືອກຂັ້ນຕອນການສຳຫຼະ
6) ປ້ອນຍອດເງິນທີ່ໄດ້ຮັບ
7) ປຸ່ມຈ່າຍຮຽບຮ້ອຍແລ້ວ

❖ ລະວັງ

(e) ກວດເບິ່ງຍອດສິນຄ້າທີ່ໄດ້ລົງທະບຽນເຮັດໜ້າທີ່ແຍກ ແລະສາມາດຂາຍໄດ້ອີກ.

▶ ໜ້າທີ່ປຸ່ມ

a. ກວດເບິ່ງສະພາບການຂາຍໃນເວລານັ້ນໆ
b. ກວດເບິ່ງລູກຄ້າ
c. ປຸ່ມລົງທະບຽນລູກຄ້າໃໝ່
d. ລົງທະບຽນການແຍກ
e. ປຸ່ມຍົກເລີກ



# 8. ການຈັດການ ທຸລະກິດສະຖານທີ່ທຳການ

## 8-8-1. ກວດເບິ່ງສະພາບການຂາຍ

ເຮັດໜ້າທີ່ກວດເບິ່ງຂອບເຂດທີ່ໄດ້ຂາຍໃນເວລານັ້ນໆ.



# 8. ການຈັດການ ທຸລະກິດສະຖານທີ່ທຳການ

## 8-9. ການຈັດການຜູ້ຊົມໃຊ້

ເຮັດໜ້າທີ່ຈັດການ ແລະລົງທະບຽນຜູ້ນຳໃຊ້.







1) ປຸ່ມຜະລິດຜູ້ນຳໃຊ້ໃໝ່
   a. ຕັ້ງຊື່, ນາມສະກຸນ
   b. ການຕັ້ງໄອດີເຂົ້າຫາ/ລະຫັດ
   c. ຕັ້ງຄ່າການເຂົ້າຫາ
2) ປຸ່ມປັບຂໍ້ມູນຜູ້ໃຊ້
3) ປຸ່ມລຶບຜູ້ໃຊ້

*ພາກສ່ວນທີ່ເປັນສີແດງແມ່ນລາຍການທີ່ຈຳເປັນທີ່ຕ້ອງໄດ້ປ້ອນເຂົ້າ

# 8. ການຈັດການ ທຸລະກິດສະຖານທີ່ທຳການ

## 8-10. ການຈັດການຄ່າໃຊ້ຈ່າຍ

ເຮັດໜ້າທີ່ ຈັດການແລະ ລົງທະບຽນຄ່າໃຊ້ຈ່າຍ .







1) ປຸ່ມຜະລິດຄ່າໃຊ້ຈ່າຍ ອັດຕາລາຍຈ່າຍ
   a. ເລືອກວັນທີ
   b. ປ້ອນຍອດເງິນລາຍຈ່າຍ
   c. ຄິກປຸ່ມສົ່ງ
2) ປຸ່ມການປັບຂໍ້ມູນຄ່າໃຊ້ຈ່າຍ
3) ປຸ່ມລົບຄ່າໃຊ້ຈ່າຍ

❖ ລະວັງ

ຕ້ອງມີກອບຄ່າໃຊ້ຈ່າຍຈຶ່ງສາມາລົງທະບຽນຄ່າໃຊ້ຈ່າຍໂຕໃໝ່ໄດ້.

# 8. ການຈັດການ ທຸລະກິດສະຖານທີ່ທຳການ

## 8-11. ການຈັດການກອບຄ່າໃຊ້ຈ່າຍ

ເຮັດໜ້າທີ່ ຈັດການແລະລົງທະບຽນ ກອບຄ່າໃຊ້ຈ່າຍ.







1) ປຸ່ມຜະລິດກອບຄ່າໃຊ້ຈ່າຍ
   a. ປ້ອນຊື່ຄາເທໂກລີ
   b. ຄຼິກປຸ່ມສົ່ງ
2) ປຸ່ມປັບຂໍ້ມູນກອບຄ່າໃຊ້ຈ່າຍ
3) ປຸ່ມລຶບກອບຄ່າໃຊ້ຈ່າຍ

# 8. ການຈັດການ ທຸລະກິດສະຖານທີ່ທຳການ

## 8-12. ການຕັ້ງຄ່າສະພາບແວດລ້ອມ

ເຮັດໜ້າທີ່ຕິດຕັ້ງຂໍ້ມູນສະຖານທຳການ ຈັດການທຸລະກິດ.




1) ປ້ອນທັງສອງຝ່າຍ
2) ປ້ອນທີ່ຢູ່ສະຖານທີ່ທຳການ
3) ປ້ອນເລກໂທລະສັບທີ່ທຳການທຸລະກິດ

❖ ລະວັງ

ຫຼັງການປັບຂໍ້ມູນບ່ອນທຳການ ແລ້ວ ຖ້າດຳເນີນການດາວໂລດຕົວເລືອກເຮັດໜ້າທີ່ຈາກ POS ຈາກນັ້ນຂໍ້ມູນທີ່ປັບປຸງກໍ່ຈະສະແດງຜົນອອກຢູ່ POS .